ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ໂທ: 021 214013-4

ເລກທີ 2006 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 0 3 MAY 2024

# ໜັງສືແຈ້ງການ

ຮຽນ: - ທ່ານຫົວໜ້າກອງກວດກາອາຫານ ແລະ ຢາ ທີ່ນັບຖື.

- ທ່ານຫົວໜ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃນທົ່ວປະເທດ.

ເລື່ອງ: ການແກ້ໄຂບັນຫາພະລິດຕະພັນເສີມສຸຂະພາບ ຊື່ການຄ້າ ເບຣ໊ອກກາ ທີ່ນໍາເຂົ້າຈາກຕ່າງປະເທດແບບບໍ່ຖືກຕ້ອງ ທີ່ພົບເຫັນໃນແຂວງພາກເໜືອ ແລະ ນະຄອນຫຼວງວຽງຈັນ

- ອີງຕາມ ການເກັບຂໍ້ມູນໃນຂອດການຈໍລະຈອນຈໍາໜ່າຍຢູ່ພາຍໃນ ແລະ ແຫຼ່ງຂໍ້ມູນຈາກຜູ້ປະກອບການກ່ຽວຂ້ອງ
- ອີງຕາມ ການຄົ້ນຄວ້າຂອງກົມອາຫານ ແລະ ຢາ

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນປະຈຸບັນໄດ້ມີສະພາບພົບພະລິດຕະພັນເສີມສຸຂະພາບທີ່ນໍາເຂົ້າບໍ່ຖືກຕ້ອງ ຈໍລະຈອນຈໍາໜ່າຍໃນຮ້ານຂາຍຢາ ທີ່ພົບເຫັນເຂດແຂວງພາກເໜືອ ໂດຍສະເພາະ ແຂວຫຼວງພະບາງ ອຸດົມໄຊ ແລະ ນະຄອນຫຼວງວຽງຈັນ ພະລິດຕະພັນດັ່ງກ່າວ ບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາກະຊວງສາທາລະນະສຸກ. ເພື່ອຕິດຕາມກວດກາການນໍາເຂົ້າທີ່ບໍ່ຖືກຕ້ອງ ແລະ ຮັບປະກັນຄຸນນະພາບພະລິດຕະພັນເສີມສຸຂະພາບ ທີ່ຈໍລະຈອນຈໍາໜ່າຍ ຢູ່ ສ ປປ ລາວ ແລະ ປະຕິບັດມາດຕະການຢ່າງທັນການ, ຈຶ່ງສະເໜີໃຫ້ແຕ່ລະພາກສ່ວນກ່ຽວຂ້ອງ ດັ່ງນີ້:

1. ສະເໜີໃຫ້ກອງກວດກາ ອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ ຊີ້ນໍາ ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອລົງຕິດຕາມກວດກາພະລິດຕະພັນເສີມສຸຂະພາບ ຊື່ການຄ້າ ເບຣ໊ອກກາ ທີ່ນໍາເຂົ້າບໍ່ຖືກຕ້ອງ ທີ່ຈໍລະຈອນຈໍາໜ່າຍໃນຂອບເຂດທົ່ວປະເທດ ຊຶ່ງມີຂໍ້ສັງເກດດັ່ງລຸ່ມນີ້:

| ພະລິດຕະພັນ ຊື່ການຄ້າ: ເບຣ໊ອກກາ (Berocca) ບໍລິສັດ ດີເຄເອັສເຮັສລາວ ຈໍາກັດ ເປັນຜູ້ນໍາເຂົ້າຖືກຕ້ອງ | ພະລິດຕະພັນ ຊື່ການຄ້າ: ເບຣ໊ອກກາ (Berocca) ທີ່ນໍາເຂົ້າບໍ່ຖືກຕ້ອງ |
|---|---|
| 1. ໄດ້ຮັບການຂຶ້ນທະບຽນຈາກກົມອາຫານ ແລະ ຢາ<br>2. ຂະໜາດບັນຈຸ 15 ເມັດ/ຫຼອດ ແລະ ແບບຊອງ 1 ກ່ອງມີ 24 ເມັດ<br>3. ມີເລກຂຶ້ນທະບຽນປາກົມອາຫານ ແລະ ຢາ ເລກທີ 08 HI 0042/17, ມີໂລໂກ DKHS ແລະ ຕິດສະຫຼາກເປັນພາສາລາວ | 1. ບໍ່ໄດ້ຮັບການຂຶ້ນທະບຽນຈາກກົມອາຫານ ແລະ ຢາ<br>2. ຂະໜາດບັນຈຸ 10 ເມັດ/ຫຼອດ, 15 ເມັດ/ຫຼອດ ແລະ ແບບຊອງ 1 ກ່ອງມີ 24 ເມັດ<br>3. ບໍ່ມີເລກທະບຽນຂອງກົມອາຫານ ແລະ ຢາ, ບໍ່ມີໂລໂກ DKHS ແລະ ບໍ່ໄດ້ຕິດສະຫຼາກເປັນພາສາລາວ |

2. ຖ້າພົບເຫັນພະລິດຕະພັນເສີມສຸຂະພາບດັ່ງກ່າວໃຫ້ຍຶດ ແລະ ເກັບຮັກສາໄວ້ນໍາກອງກວດກາອາຫານ ແລະ ຢາ ແລະ ຂະແໜງອາຫານ ແລະ ຢາແຂວງ, ພ້ອມທັງເກັບກໍາຂໍ້ມູນໃນການສະໜອງ ຫຼື ແຫຼ່ງທີ່ມາໃຫ້ລະອຽດ ແລ້ວລາຍງານໃຫ້ກົມອາຫານ ແລະ ຢາຊາບໂດຍດ່ວນ.

3. ໃຫ້ສືບຕໍ່ປະສານ ແລະ ວາງແຜນແກ້ໄຂຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ດ້ວຍ.

ຫົວໜ້າກົມ

ໝາຍເຫດ: ມີຮູບພາບຄັດຕິດມາພ້ອມນີ້

ປອ. ດຣ. ບຸນຊູ ແກ້ວທາວົງ

Scanned with CamScanner

ວິຕາມິນຈາກອົດສະຕາລີ

4h ·

ເຊວງ 10$

ຖືກກ່ອນນີ້ບໍ່ມີອີກແລ້ວ… See more












Scanned with CamScanner